# ປະທານປະເທດ
# ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ນະຄອນຫຼວງວຽງຈັນ, ວັນທີ 20 ມັງກອນ 2021

ພະນະທ່ານ,

ຕາງໜ້າປະຊາຊົນລາວ ທຸກຖ້ວນໜ້າ ແລະ ໃນນາມສ່ວນຕົວ, ຂ້າພະເຈົ້າ ມີຄວາມປິຕິຍິນດີເປັນຢ່າງຍິ່ງ ແລະ ຮູ້ສຶກເປັນກຽດຢ່າງສູງສິ່ງຄຳຊົມເຊີຍອັນອົບອຸ່ນ ມາຍັງ ພະນະທ່ານ ເນື່ອງໃນໂອກາດເຂົ້າຮັບຕຳແໜ່ງເປັນ ປະທານາທິບໍດີ ຄົນທີ 46 ຂອງ ສະຫະລັດ ອາເມຣິກາ ຢ່າງເປັນທາງການ.

ຂ້າພະເຈົ້າ ມີຄວາມຍິນດີເປັນຢ່າງຍິ່ງ ທີ່ເຫັນວ່າ ສາຍພົວພັນມິດຕະພາບ ແລະ ການຮ່ວມມືທີ່ດີລະຫວ່າງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ສະຫະລັດ ອາເມຣິກາ ໄດ້ຮັບການເສີມຂະຫຍາຍຢ່າງຕໍ່ເນື່ອງຕະຫຼອດໄລຍະ 65 ປີຜ່ານມາ. ຂ້າພະເຈົ້າ ຫວັງຢ່າງຍິ່ງວ່າ ຈະໄດ້ເຮັດວຽກຮ່ວມກັບ ພະນະທ່ານ ຢ່າງໃກ້ຊິດ ເພື່ອສືບຕໍ່ເພີ່ມທະວີ ການຮ່ວມມືທີ່ດີລະຫວ່າງສອງປະເທດ ບົນພື້ນຖານການເປັນຄູ່ຮ່ວມມືແບບກວມລວມ ເພື່ອຮັບປະກັນຜົນປະໂຫຍດຂອງປະຊາຊົນສອງຊາດພວກເຮົາ ກໍ່ຄື ເພື່ອສັນຕິພາບ, ສະຖຽນລະພາບ, ຄວາມຍຸຕິທຳ ແລະ ການຮ່ວມມືເພື່ອການພັດທະນາໃນພາກພື້ນ ແລະ ໃນທົ່ວໂລກ.

ຂ້າພະເຈົ້າ ຂໍຖືໂອກາດນີ້ ອວຍພອນໄຊອັນປະເສີດ ມາຍັງ ພະນະທ່ານ ຈົ່ງມີສຸຂະພາບເຂັ້ມແຂງ, ພະລານາໄມສົມບູນ ແລະ ປະສົບຄວາມສຳເລັດທຸກປະການ ໃນໜ້າທີ່ອັນສູງສົ່ງຂອງຕົນ.

ດ້ວຍຄວາມນັບຖືຢ່າງສູງ,

ບຸນຍັງ ວໍລະຈິດ

ພະນະທ່ານ ໂຈເຊບ ອາ. ໄບເດັນ ເຈອາ
ປະທານາທິບໍດີ ແຫ່ງ ສະຫະລັດ ອາເມຣິກາ
ທີ່ ວໍຊິງຕັນ, ດີຊີ

(Unofficial translation)

Vientiane, 20 January 2021

Your Excellency,

On the occasion of the official inauguration of Your Excellency as the 46th President of the United States of America, on behalf of the Lao people and my own behalf, I have the great honour and pleasure to extend to Your Excellency my cordial congratulations.

I am delighted to note that the friendly relations and good cooperation between the Lao People's Democratic Republic and the United States of America have been continuously enhanced over the past 65 years. I look forward to working closely with Your Excellency to further strengthen the friendly ties and good cooperation between our two countries based on the Comprehensive Partnership thus ensuring mutual benefits of our two peoples as well as peace, stability, justice and cooperation for development in our respective region and the world at large.

May I take this opportunity to wish Your Excellency good health, personal well-being and every success in your lofty responsible duties.

Please accept, Your Excellency, the assurances of my highest consideration.

(Signed)

Bounnhang VORACHITH

H.E. Mr. Joseph R. Biden Jr
President of the United States of America
Washington, DC